


# ການແຈ້ງເຕືອນກ່ຽວກັບຂີດຈຳກັດການເຮັດວຽກຕໍ່ອາທິດ (WWL)

## ພາບລວມກ່ຽວກັບຂີດຈຳກັດການເຮັດວຽກຕໍ່ອາທິດ (WWL)

- WWL ຂອງທ່ານແມ່ນຈຳນວນຊົ່ວໂມງບໍລິການລວມທັງໝົດ ທີ່ທ່ານສາມາດໃຫ້ບໍລິການໄດ້ໃນໜຶ່ງອາທິດ (ວັນອາທິດ ຫາ ວັນເສົາ)
- ຕາມມາດຕະຖານແມ່ນສີ່ສິບ (40) ຊົ່ວໂມງບໍລິການຕໍ່ອາທິດ
- ທ່ານຈະບໍ່ສາມາດເຮັດວຽກໄດ້ຫຼາຍກ່ວາ 40 ຊົ່ວໂມງຕໍ່ອາທິດ ເວັ້ນເສຍແຕ່ຈະໄດ້ຮັບການອະນຸມັດຈາກ CDWA ແລ້ວເທົ່ານັ້ນ
- ທ່ານເປັນຜູ້ຮັບຜິດຊອບໃນການຮັກສາຊົ່ວໂມງທີ່ມອບໃຫ້ລູກຄ້າໃຫ້ຢູ່ພາຍໃນຈຳນວນ WWL ທີ່ທ່ານໄດ້ຮັບອະນຸມັດ
- ຈຳນວນຊົ່ວໂມງບໍລິການຈະຖືກນັບເຂົ້າໃສ່ WWL ແລະ ລວມທັງເວລາທີ່ໄດ້ໃຊ້ເພື່ອໃຫ້:
    - ການດູແລສ່ວນຕົວ
    - ການດູແລບັນເທົາ
    - ການຝຶກອົບຮົມເພື່ອພັດທະນາທັກສະ
    - ການບໍລິການພັກຜ່ອນຊົ່ວຄາວ
- ເວລາເຮັດວຽກບໍລິຫານ, ເວລາເດີນທາງ ແລະ ການຝຶກອົບຮົມພາກບັງຄັບ ຈະບໍ່ຖືກນັບເຂົ້າໃສ່ WWL ຂອງທ່ານ
- ຖ້າທ່ານໄດ້ເຮັດວຽກຄົບຈຳນວນຊົ່ວໂມງເຮັດວຽກຕໍ່ອາທິດຂອງທ່ານແລ້ວ ແລະ ຍັງຈຳເປັນຕ້ອງໄດ້ຢູ່ກັບລູກຄ້າໃຫ້ປະຕິບັດຕາມຂັ້ນຕອນເຫຼົ່ານີ້:
    - ຢູ່ກັບລູກຄ້າຈົນກ່ວາສະຖານະການຈະສະຖຽນ ແລະ ປອດໄພ
    - ຖ້າມີຄວາມຕ້ອງການການບໍລິການທາງການແພດສຸກເສີນ, ຕິດຕໍ່ 9-1-1
    - ຊ່ວຍລູກຄ້າຂອງທ່ານໃນການຈັດແຈງການຊ່ວຍເຫຼືອສຳຮອງ
    - ຢຸດການເຮັດວຽກຂອງທ່ານທັນທີທີ່ເຫັນວ່າຍັງມີຄວາມປອດໄພ
    - ຕິດຕໍ່ CDWA ໃຫ້ໄວເທົ່າທີ່ຈະໄວໄດ້ ຫຼື ຢ່າງໜ້ອຍໃນວັນລັດຖະການຖັດໄປ, ເພື່ອລາຍງານສະຖານະການ

## ການຈັດຕາຕະລາງເວລາ

- ບັນດາລູກຄ້າຈະກຳນົດຕາຕະລາງການເຮັດວຽກໂດຍອີງໃສ່ຈຳນວນຊົ່ວໂມງ ແລະ ໜ້າວຽກທີ່ໄດ້ຮັບການອະນຸມັດຂອງພວກເຂົາ
- ທ່ານຈຳຕ້ອງໄດ້ປະສານງານກັບລູກຄ້າສຳລັບການປ່ຽນແປງຕາຕະລາງການເຮັດວຽກໃດໆ, ບໍ່ແມ່ນ CDWA ເປັນຜູ້ປະສານ
- ທ່ານຈຳຕ້ອງໄດ້ແຈ້ງລູກຄ້າຂອງທ່ານ ຖ້າທ່ານບໍ່ສາມາດໄປເຮັດວຽກໄດ້
- ການບໍ່ໄປເຮັດວຽກ ຫຼື ການມາເຮັດວຽກຊ້າ ອາດສົ່ງຜົນໃຫ້ລູກຄ້າຍົກເລີກການຈ້າງງານຂອງທ່ານ
- ທັງທ່ານ ແລະ ລູກຄ້າມີໜ້າທີ່ຮັບຜິດຊອບໃນການຕິດຕາມກວດກາຈຳນວນຊົ່ວໂມງ ແລະ ຮັບປະກັນບໍ່ໃຫ້ເກີນຈຳນວນຊົ່ວໂມງທີ່ໄດ້ຮັບການອະນຸມັດປະຈຳເດືອນຂອງລູກຄ້າ
- Iທ່ານມີຄວາມຮັບຜິດຊອບໃນການຮັກສາຈຳນວນຊົ່ວໂມງທີ່ລູກຄ້າແຕ່ລະຄົນມອບໃຫ້ແກ່ທ່ານໃຫ້ຢູ່ພາຍໃນຈຳນວນ WWL ທີ່ໄດ້ມອບໃຫ້ທ່ານ
- ບັນດາລູກຄ້າຈະມອບຊົ່ວໂມງໃຫ້ແກ່ IP ຂອງຕົນ ແລະ ທ່ານຈະສາມາດເບິ່ງເຫັນປະເພດການບໍລິການ ແລະ ຈຳນວນຊົ່ວໂມງທີ່ໄດ້ຮັບອະນຸຍາດສຳລັບທ່ານໄດ້ຢູ່ໃນເວັບ DirectMyCare (DMC)
- ການອະນຸຍາດແກ່ການຝຶກອົບຮົມຂອງທ່ານກໍຍັງຈະປາກົດຢູ່ໃນເວັບ DMC ອີກດ້ວຍ
- ຊຸບລູກຄ້າໄດ້ຮັບການຊຸກຍູ້ໃຫ້ສ້າງແຜນສຳຮອງກັບຜູ້ຈັດການກໍລະນີຂອງພວກເຂົາ ແລະ ລູກຄ້າຄວນໃຊ້ແຜນນີ້ຖ້າ IP ຂອງພວກເຂົາບໍ່ສາມາດເຮັດວຽກຕາມຈຳນວນຊົ່ວໂມງທີ່ກຳນົດໄວ້ຢ່າງເປັນປົກກະຕິໄດ້
- ລູກຄ້າຄວນທົບທວນແຜນສຳຮອງຂອງພວກເຂົາກັບທ່ານ
- ການເຮັດວຽກລ່ວງເວລາທີ່ບໍ່ໄດ້ຮັບການອະນຸມັດ (OT) ບໍ່ຖືວ່າແມ່ນແຜນສຳຮອງທີ່ສາມາດໃຊ້ການໄດ້
- ສຳລັບວິດີໂອແນະນຳຢູ່ໃນເວັບ DMC, ກະລຸນາໄປທີ່: https://www.ConsumerDirectWA.com/IP-Resources/

20220428

ມີຕໍ່ໃນໜ້າຕໍ່ໄປ

## ຂີດຈຳກັດການເຮັດວຽກຕໍ່ອາທິດ (WWL) ຊົ່ວຄາວ

- ທ່ານສາມາດຈະເຮັດວຽກເກີນ 40 ຊົ່ວໂມງຕໍ່ອາທິດໄດ້ ຖ້າທ່ານໄດ້ຮັບຈຳນວນ WWLທີ່ສູງກວ່າເພື່ອຮອງຮັບຄວາມຕ້ອງການດ້ານສຸຂະພາບແລະຄວາມປອດໄພຂອງລູກຄ້າ, ເຊິ່ງໄດ້ແກ່:
  - ການຂາດແຄນແຮງງານ
  - ຄວາມຕ້ອງການດ້ານສຸຂະພາບ ແລະ ຄວາມປອດໄພຂອງລູກຄ້າ
  - ຄວາມສ່ຽງທີ່ລູກຄ້າຈະໄດ້ເຂົ້າໄປຢູ່ໃນສະຖານດູແລ
- ທ່ານ ຫຼື ລູກຄ້າຂອງທ່ານ ຄວນຈະເຮັດຄຳຮ້ອງຂໍໂດຍກົງໄປຫາຜູ້ປະສານງານການບໍລິການຂອງ CDWA
- ຖ້າທ່ານເຮັດວຽກເກີນຈຳນວນ WWL ຊົ່ວຄາວທີ່ໄດ້ຮັບການອະນຸມັດຂອງທ່ານ, ທ່ານອາດຈະຖືກປະຕິບັດວິໄນ ໄປຈົນເຖິງ ແລະ ລວມທັງຍົກເລີກການຈ້າງງານ

## ຂີດຈຳກັດອາທິດການເຮັດວຽກ (WWL) ຖາວອນ

- ອີງຕາມ RCW74.39A.525(4)(a), CDWA ອາດຈະອະນຸຍາດໃຫ້ທ່ານເຮັດວຽກເກີນ 40 ຊົ່ວໂມງຕໍ່ອາທິດໄດ້, ເມື່ອ DSHS ເປັນຜູ້ກຳນົດ.
- ຈຳນວນ WWL ຖາວອນມີຢູ່ຕະຫຼອດຊີວິດຂອງອາຊີບ IP ແລະ ໄດ້ຮັບການຢັ້ງຢືນດ້ວຍຂໍ້ມູນຂອງ DSHS
- ຖ້າທ່ານເຮັດວຽກເກີນຈຳນວນ WWL ຖາວອນທີ່ໄດ້ຮັບການອະນຸມັດຂອງທ່ານ, ທ່ານອາດຈະຖືກປະຕິບັດວິໄນ ໄປຈົນເຖິງ ແລະ ລວມທັງການຍົກເລີກຈ້າງງານ

# ມີຄຳຖາມບໍ? **ກະລຸນາຕິດຕໍ່ຫາພວກເຮົາເລີຍ!**

InfoCDWA@ConsumerDirectCare.com | 866.214.9899

**ທ່ານສາມາດຊອກຂໍ້ມູນເພີ່ມເຕີມກ່ຽວກັບ CDE ໄດ້ແນວໃດ?**

ຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບ CDE ແລະ CDWA ໄດ້ທີ່ **www.ConsumerDirectWA.com**

CONSUMER DIRECT CARE NETWORK WASHINGTON

20220215